# ຂໍ້ມູນສໍາລັບຜູ້ທີ່ຕິດວັນນະໂຣກ (ໂຣກປອດແຫ້ງ - TB)



## ເປັນຫຍັງພວກເຮົາຈຶ່ງໄດ້ຕິດຕໍ່ທ່ານກ່ຽວກັບ ວັນນະໂຣກ

ທ່ານໄດ້ຖືກລະບຸວ່າເປັນຄົນທີ່ໄດ້ມີການສຳພັດກັບຄົນທີ່ມີ ວັນນະໂຣກ. ເນື່ອງຈາກວ່າມັນເປັນໂຣກຕິດຕໍ່ ຈຶ່ງມີຄວາມສ່ຽງທີ່ທ່ານອາດຈະໄດ້ຕິດເຊື້ອໂຣກທີ່ກໍ່ໃຫ້ເກີດ ວັນນະໂຣກໄດ້. ດັ່ງນັ້ນ ພວກເຮົາຈຶ່ງຂໍແນະນຳທ່ານໃຫ້ທຳການກວດຊຶ່ງຈະສາມາດອຳນວຍໃຫ້ພວກເຮົາກວດເບິ່ງວ່າທ່ານໄດ້ຕິດວັນນະໂຣກແລ້ວ ຫຼື ໄດ້ມີວັນນະໂຣກເບື້ອງຕົ້ນ ຫຼືບໍ່. ມັນຂຶ້ນຢູ່ກັບຜົນຂອງການກວດ ພວກເຮົາອາດຈະແນະນຳໃຫ້ມີການຮັກສາ ຫຼື ການຕິດຕາມເບິ່ງອາການ.

## ວັນນະໂຣກແມ່ນຫຍັງ?

ວັນນະໂຣກເປັນໂຣກທີ່ສາມາດຮັກສາໃຫ້ຫາຍຂາດໄດ້ຊຶ່ງເປັນໂຣກທີ່ເກີດມາຈາກການຕິດເຊື້ອ ມີໂກແບັກເຕຣຽມ ຕຸຍແບກຸຍໂລຊິສ(Mycobacterium tuberculosis). ຕາມປົກກະຕິແລ້ວໂຣກນີ້ຈະກະທົບຕໍ່ປອດ ແຕ່ວ່າບາງຄັ້ງກໍສາມາດກະທົບສ່ວນອື່ນໆຂອງຮ່າງກາຍໄດ້ ເຊັ່ນ ຕ່ອມນ້ຳເຫຼືອງ ໝາກໄຂ່ຫຼັງ ກະດູກ ແລະ ອື່ນໆ.

## ແຕ່ວ່າ ຂ້ອຍບໍ່ຮູ້ຈັກຄົນທີ່ເປັນວັນນະໂຣກ!

ທ່ານອາດຈະບໍ່ຮູ້ຄົນທີ່ທ່ານໄດ້ມີການຕິດຕໍ່ພົວພັນນຳວ່າເປັນຜູ້ມີວັນນະໂຣກ. ເນື່ອງຈາກວ່າທຸກໆກໍລະນີຂອງວັນນະໂຣກໄດ້ຮັບການຮັກສາແບບຖືເປັນຄວາມລັບ ພວກເຮົາຈຶ່ງບໍ່ສາມາດບອກທ່ານໄດ້ວ່າຄົນໆນັ້ນແມ່ນໃຜ. ເຖິງ ຢ່າງໃດກໍຕາມ ຄົນນັ້ນກໍໄດ້ປະຕິບັດຕົວດ້ວຍຄວາມຮັບ ຜິດຊອບແລະໄດ້ແຈ້ງວ່າທ່ານໄດ້ມີການສຳພັດກັບໂຣກນີ້.

## ຜູ້ຄົນໄດ້ຕິດວັນນະໂຣກໄດ້ຢ່າງໃດ?

ເຊື້ອວັນນະໂຣກແພ່ຜາຍໄດ້ໂດຍຜ່ານທາງອາກາດໃນເວລາຄົນໆນຶ່ງທີ່ເປັນວັນນະໂຣກຢູ່ໃນປອດຫຼືຮູຄໍໄດ້ໄອ ຈາມ ຮ້ອງເພງ ຫຼື ເວົ້າ, ໄດ້ສົ່ງຝອຍນ້ຳລາຍໄປທາງອາກາດ. ຝອຍນ້ຳລາຍເຫຼົ່ານີ້ສາມາດຖືກຄົນອື່ນສູດຫາຍໃຈເອົາໄດ້. ຄົນສ່ວນຫຼາຍຕິດເຊື້ອວັນນະໂຣກໄດ້ຈາກການທີ່ໄດ້ໃຊ້ເວລາຢູ່ກັບຜູ້ທີ່ມີໂຣກນີ້ຫຼາຍເທົ່ານັ້ນ. ມັນເປັນສິ່ງຜິດປົກກະຕິທີ່ຈະຕິດເຊື້ອວັນນະໂຣກໄດ້ໂດຍການຕິດຕໍ່ພົວພັນກັບຄົນນຶ່ງແບບຄາວດຽວຫຼືໂດຍບັງເອີນ. ວັນນະໂຣກ ບໍ່ ແພ່ຜາຍໂດຍທາງເຄື່ອງຂອງໃຊ້ໃນເຮືອນເຊັ່ນ ບ່ອງສ້ອມ ແລະ ຖ້ວຍຈານແລະ ເຄື່ອງໂທຣະສັບ.

## ຂ້ອຍຈະສາມາດບອກໄດ້ຢ່າງໃດວ່າໄດ້ຕິດເຊື້ອໂຣກແລ້ວ?

ການກວດກັ່ນກອງສາມາດເຮັດໄດ້ຢູ່ຕາມຄລີນິກກວດໜ້າເອິກໃນທ້ອງຖິ່ນທົ່ວໄປ. ການກວດເຫຼົ່ານີ້ກວມເອົາ:

1. ການກວດວັນນະໂຣກດ້ວຍຜິວໜັງ (ເອີ້ນອີກຢ່າງນຶ່ງວ່າ ການກວດ Mantoux). ອັນນີ້ແມ່ນການສັກຢານ້ອຍແລະປອດໄພເຂົ້າໃຕ້ຜິວໜັງຂ້າງນອກຂອງຕົ້ນແຂນ. ມັນສາມາດສະແດງໃຫ້ເຫັນວ່າທ່ານໄດ້ຕິດເຊື້ອຂອງວັນນະໂຣກ ຫຼືບໍ່. ທ່ານຈະຕ້ອງກັບມາອີກພາຍໃນ 2 ຫາ 3 ວັນຫຼັງຈາກທີ່ໄດ້ທຳການກວດນີ້ເພື່ອວ່າຜົນການກວດຂອງທ່ານຈະສາມາດອະທິບາຍໄດ້ວ່າເປັນທາງບວກ ຫຼື ທາງລົບ.
2. ບາງຄັ້ງການກວດເລືອດ ຫຼື ການກວດ ວັນນະໂຣກດ້ວຍຜິວໜັງເພີ້ມຕື່ມອາດຈະຕ້ອງເຮັດເພື່ອຊ່ວຍອະທິບາຍ ຜົນຂອງການກວດຄັ້ງທີນຶ່ງ.
3. ການຖ່າຍເອັກຊເຣໜ້າເອິກສາມາດສະແດງໃຫ້ເຫັນວ່າມີຫຼັກຖານຂອງວັນນະໂຣກຢູ່ໃນປອດຂອງທ່ານຫຼືບໍ່. ບາງຄັ້ງ ການຖ່າຍເອັກຊເຣໜ້າເອິກອາດຈະສະແດງໃຫ້ເຫັນເຖິງຮ່ອງຮອຍຂອງວັນນະໂຣກທີ່ຜ່ານມາ ເຖິງແມ່ນວ່າທ່ານຈະບໍ່ຮູ້ວ່າທ່ານເຄີຍມີວັນນະໂຣກມາກ່ອນກໍຕາມ.

## ຂ້ອຍເຄີຍໄດ້ສັກຢາປ້ອງກັນໂຣກ BCG. ການສັກຢານີ້ບໍ່ປ້ອງກັນຂ້ອຍບໍ?

BCG ໃຫ້ການປ້ອງກັນວັນນະໂຣກບາງສ່ວນເທົ່ານັ້ນ ແລະ ສ່ວນໃຫຍ່ແມ່ນປ້ອງກັນເດັກນ້ອຍ. ທ່ານສາມາດຕິດວັນນະໂຣກໄດ້ເຖິງແມ່ນວ່າທ່ານເຄີຍໄດ້ສັກຢາ BCG ມາກ່ອນກໍຕາມ.

## ຈະມີຫຍັງເກີດຂຶ້ນຖ້າຜົນການກວດຂອງຂ້ອຍອອກມາໃນທາງລົບ?

ຖ້າການກວດຄັ້ງທຳອິດຂອງທ່ານເປັນທາງລົບ ອາດຈະຕ້ອງມີການກວດຊ້ຳອີກພາຍໃນປະມານ 2 ຫາ 3 ເດືອນ. ອັນນີ້ແມ່ນເປັນຍ້ອນວ່າມັນອາດຈະຕ້ອງກິນເວລາຫຼາຍອາທິດຫຼັງຈາກການສຳພັດກັບວັນນະໂຣກເພື່ອວ່າລະບົບ ພູມຕ້ານທານຂອງທ່ານຈະມີປະຕິກິຣິຍາຕໍ່ການກວດດ້ວຍຜິວໜັງ. ດັ່ງນັ້ນ ຖາຫາກວ່າໄດ້ມີການແນະນຳໃຫ້ທຳການກວດຄັ້ງທີສອງ ມັນເປັນສິ່ງສຳຄັນທີ່ສຸດທີ່ທ່ານຕ້ອງມາທຳການກວດນີ້ເພື່ອໃຫ້ແນ່ໃຈວ່າທ່ານໄດ້ປອດຈາກການຕິດວັນນະໂຣກ. ຕາມທັມມະດາແລ້ວ ຖ້າຜົນການ ກວດຂອງທ່ານຍັງອອກມາເປັນທາງລົບອີກ ທ່ານກໍບໍ່ຕ້ອງທຳການກວດຕື່ມອີກ.

## ຈະມີຫຍັງເກີດຂຶ້ນຖ້າການກວດວັນນະໂຣກດ້ວຍຜິວໜັງ (Mantoux) ເປັນທາງບວກ?

ຖ້າການກວດຂອງທ່ານເປັນທາງບວກ ທ່ານອາດຈະຕ້ອງຖືກແນະນຳສົ່ງຕໍ່ໄປຫານາຍໝໍຊ່ຽວຊານດ້ານວັນນະໂຣກ, ມັນຂຶ້ນຢູ່ກັບຜົນການເອັກຊເຣໜ້າເອິກຂອງທ່ານແລະປັດ ໄຈອື່ນໆອີກນຳ ຊຶ່ງພະຍາບານຈະໂອ້ລົມກັບທ່ານ.

ຜົນການກວດວັນນະໂຣກດ້ວຍຜິວໜັງທີ່ເປັນທາງບວກນັ້ນ ຕາມທັມມະດາໝາຍຄວາມວ່າ ທ່ານໄດ້ຕິດເຊື້ອໂຣກທີ່ກໍ່ໃຫ້ເກີດເປັນວັນນະໂຣກ. (ບາງຄັ້ງ ການກວດທີ່ເປັນທາງບວກອ່ອນໆກໍ່ເກີດຂຶ້ນໄດ້ ໃນຜູ້ຄົນທີ່ເຄີຍໄດ້ສັກຢາ BCG ມາແລ້ວ ຫຼື ອາດເປັນຍ້ອນເຫດຜົນອື່ນ ບໍ່ກ່ຽວກັບການຕິດເຊື້ອວັນນະໂຣກ). ຜົນການກວດທີ່ເປັນທາງບວກ ນັ້ນບໍ່ ຈຳເປັນທີ່ຈະໝາຍຄວາມວ່າທ່ານໄດ້ຕິດເຊື້ອໂຣກຍ້ອນວ່າທ່ານໄດ້ຕິດຕໍ່ພົວພັນກັບຄົນທີ່ມີວັນນະໂຣກເມື່ອໄວໆມາ ນີ້. ຖ້າຫາກວ່າທ່ານໄດ້ຢູ່ໃນປະເທດທີ່ວັນນະໂຣກເປັນໂຣກສາມັນທົ່ວໄປ ກໍອາດຈະມີທາງເປັນໄປໄດ້ວ່າທ່ານໄດ້ຕິດເຊື້ອໂຣກມາເປັນເວລານານພໍສົມຄວນ. ປະມານ 1/3 ຂອງປະຊາກອນໂລກຕິດວັນນະໂຣກ ເຖິງແມ່ນວ່າມັນເປັນສິ່ງທີ່ເກີດຂຶ້ນນ້ອຍທີ່ສຸດໃນຜູ້ຄົນທີ່ເກີດໃນອອສເຕຣເລັຍກໍຕາມ.

ການຕິດເຊື້ອວັນນະໂຣກ (ການກວດວັນນະໂຣກດ້ວຍຜິວ ໜັງເປັນທາງບວກ)ນັ້ນ ບໍ່ ໝາຍຄວາມວ່າທ່ານມີວັນນະໂຣກ. ເຖິງຢ່າງໃດກໍຕາມ ມັນກໍໝາຍຄວາມວ່າທ່ານໄດ້ມີຄວາມສ່ຽງຕໍ່ການພັດທະນາໃຫ້ເກີດເປັນວັນນະໂຣກ. ຄວາມສ່ຽງນີ້ຈະຫຼາຍເທົ່າໃດກໍຂຶ້ນຢູ່ກັບຫຼາຍປັດໄຈຮວມເຖິງວ່າທ່ານໄດ້ຕິດເຊື້ອໂຣກມາດົນເທົ່າໃດ (ອີກຄວາມໝາຍນຶ່ງກໍຄື ທ່ານໄດ້ຕິດເຊື້ອໂຣກເມື່ອງມາຈາກການຕິດຕໍ່ພົວພັນທີ່ທ່ານມີມາເມື່ອໄວໆນີ້ຫຼືບໍ່) ທ່ານມີອາຍຸເທົ່າໃດ ແລະ ທ່ານມີບັນຫາສຸຂພາບບາງຢ່າງ ຫຼືບໍ່. ພະຍາບານ ຫຼື ນາຍໝໍຈະເວົ້າລົມເລື້ອງນີ້ກັບທ່ານຕື່ມ.

## ການຕິດເຊື້ອວັນນະໂຣກຈະສາມາດຮັກສາໄດ້ບໍ່?

ການຕິດເຊື້ອວັນນະໂຣກສາມາດຖືກຮັກສາໄດ້ເພື່ອຊ່ວຍປ້ອງກັນບໍ່ໃຫ້ວັນນະໂຣກພັທນາເຕີບໂຕໃນອະນາຄົດ. ຕາມທັມມະດາແລ້ວການຮັກສານີ້ຈະກວມເອົາການກິນ ຢາຢ່າງນຶ່ງໃນບັນດາຢາທີ່ພວກເຮົາໃຊ້ໃນການຮັກສາຄົນທີ່ມີວັນນະໂຣກ (ອີໂຊເນັຍຊິດ - isoniazid) ທຸກໆວັນເປັນເວລາຫົກຫາເກົ້າເດືອນ. ການຮັກສານີ້ມີປະສິດທິຜົນເຖິງ 60% ຫາ 90%ໃນການປ້ອງກັນວັນນະໂຣກໃນຄົນທີ່ຕິດເຊື້ອວັນນະໂຣກມາແລ້ວ. ຕາມທັມມະດາແລ້ວ ການຮັກສານີ້ແມ່ນປອດພັຍໂດຍສະເພາະແລ້ວແມ່ນໃນບັນດາຊາວໜຸ່ມ. ຖ້ານາຍໝໍຂອງທ່ານແນະນຳການຮັກສາແບບນີ້ໃຫ້ ເພິ່ນກໍຈະບອກທ່ານເພີ້ມຕື່ມກ່ຽວກັບຜົນປໂຍດ ແລະ ຄວາມສ່ຽງຂອງການຮັກສານີ້.

## ຖ້າຂ້ອຍໄດ້ຕິດເຊື້ອວັນນະໂຣກຈະ ມີວິທີທາງອື່ນບໍ່ນອກຈາກການຮັບການຮັກສານີ້?

ມີ. ຖ້າຫາກຄວາມສ່ຽງໃນການພັທນາເປັນເຊື້ອວັນນະໂຣກ ຕ່ຳ (ແລະໂດຍສະເພາະຖ້າຄວາມສ່ຽງຂອງທ່ານຕໍ່ອາການຂ້າງຄຽງຈາກການຮັກສານີ້ ບໍ່ ຕ່ຳ), ມັນກໍອາດຈະເປັນການສົມເຫດຜົນທີ່ຈະເລືອກເອົາວິທີ "ລໍຖ້າເບິ່ງ". ດ້ວຍວິ ທີນີ້ ພວກເຮົາຈະແນະນຳໃຫ້ຕິດຕາມດ້ວຍທຳການຖ່າຍເອັກຊເຣໜ້າເອິກພາຍໃນລະຍະສອງປີຂ້າງໜ້າ. ມັນເປັນ ສິ່ງສຳຄັນທີ່ຕ້ອງຮູ້ເຖິງອາການເບື້ອງຕົ້ນຂອງວັນນະໂຣກ ຊຶ່ງອາດຈະເກີດຂຶ້ນໄດ້ທຸກເວລາພາຍໃນລະຍະ ຫຼື ຫຼັງການຕິດຕາມເບິ່ງດ້ວຍການຖ່າຍເອັກຊເຣ ແລະ ຈົ່ງໄປຫາຄລີນິກກວດໜ້າເອິກໃນທ້ອງຖິ່ນຖ້າຫາກວ່າອາການເຫຼົ່ານີ້ເກີດຂຶ້ນ.

## ຖ້າຂ້ອຍຍັງມີຄຳຖາມອີກເດ?

ຖ້າທ່ານມີຄຳຖາມເພີ້ມຕື່ມ ຫຼື ທ່ານບໍ່ເຂົ້າໃຈຂໍ້ມູນບາງຢ່າງໃນປື້ມນ້ອຍນີ້ ກະຣຸນາເວົ້າລົມກັບພະຍາບານ ຫຼື ນາຍໝໍທີ່ຢູ່ໃນຄລີນິກກວດໜ້າເອິກພວກເຂົາຍິນດີທີ່ຈະອະທິບາຍທຸກໆສິ່ງໃຫ້ທ່ານ.

## ເພື່ອເອົາຂໍ້ມູນເພີ້ມຕື່ມກ່ຽວກັບວັນນະໂຣກ ກະຣຸນາ ຂໍເອົາ NSW Health Tuberculosis Fact Sheet (ເຈັ້ຍຂໍ້ມູນກ່ຽວກັບວັນນະໂຣກ ຂອງກະຊວງສາທະຣະນະສຸກ NSW) ສຳເນົານຶ່ງທີ່ຄລີນິກກວດໜ້າເອິກຂອງທ່ານ ຫຼື ເບິ່ງຕາມເວັບໄຊຕ໌ທີ່ຢູ່ຕໍ່ລົງໄປນີ້:

http://www.health.nsw.gov.au/Infectious/factsheets/Pages/Tuberculosis.aspx

http://www.health.nsw.gov.au/Infectious/tuberculosis/Pages/tuberculosis-factsheets.aspx

(ຂໍ້ມູນເປັນພາສາອື່ນໆນອກຈາກພາສາອັງກິດ)

## ຣາຍລະອຽດຂອງການຕິດຕໍ່ສຳລັບ ຄລີນິກ ກວດໜ້າເອິກ ໃນຣັດ NSW ສາມາດຫາເອົາໄດ້ຕາມເວັບໄຊຕ໌ດັ່ງຕໍ່ລົງໄປນີ້:

http://www.health.nsw.gov.au/Infectious/tuberculosis/Pages/chest-clinics.aspx